# ບົດທີ 22

# ການສິ້ນພະຊົນ ແລະ ການວາງສົບໃສ່ອຸບໂມງ



ປ້າຍທີ່ປີລາດຕິດໃສ່ໄມ້ກາງແຂນນັ້ນມີຄໍາຂຽນໃນສາມພາສາຄື: ພາສາເຮັບເລີ ພາສາໂລມແລະພາສາກະລີກ. ທີ່ປີລາດຂຽນຄວາມນັ້ນສະແດງວ່າເພິ່ນເອງເຊື່ອບໍ່? ຊາດຢິວເຫັນແລ້ວເຂົາຄິດຢ່າງໃດ? ທ່ານຮັບເຊື່ອວ່າຄວາມນັ້ນຈິງບໍ່? ຜູ້ຈະຄິດຢ່າງໃດກໍມີໝົດ! ໃນບົດຮຽນນີ້ເຮົາຈະສຶກສາເລື່ອງນີ້.

| |
|---|
| ເພື່ອຈະຊອກຫາພະທໍາມັດທາຍບົດທີ 27 ໄດ້ງ່າຍ ໃຫ້ທ່ານເອົາເຈ້ຍໃບນ້ອຍໆ ສອດໃສ່ໄວ້ໃນບົດນັ້ນແຕ່ສະເພາະເວລາຮຽນບົດຮຽນນີ້ |

**1** ໃຫ້ອ່ານ ມທ 27:32-36 ໃນຂໍ້ 34 ເຂົາເອົາຫຍັງມາໃຫ້ພະອົງ? ____________________

**2** ເຂົາໃສ່ນ້ຳບີນັ້ນເປັນຢາບັນເທົາຄວາມເຈັບປວດ ແລະເຂົາໃຊ້ເປັນຢາອາບສົບອີກດ້ວຍ. ພະອົງຊີມແລ້ວເຮັດຢ່າງໃດ? (ເລືອກ)

ກ. ______ ຂໍເອົາອີກ ຂ. ______ ບໍ່ຍອມຮັບ ຄ. ______ ກິນ

**3** ເຂົາຍົກສິ່ງເຫຼົ່ານັ້ນໃຫ້ພະອົງເປັນຢາຫຍັງ? ___________________________________

**4** ໃນໂຢຮັນ 18:11 ພະເຢຊູອ້າງເຖິງ "ຈອກ" ທີ່ປຽບທຽບນ້ຳພະໄທຂອງພະບິດາຄືສິ່ງທີ່ພະບິດາຈັດໄວ້ໃຫ້ ພະເຢຊູກະທຳ. ໃນເມື່ອພະເຢຊູຈະກິນຈາກຈອກນັ້ນມີຄວາມໝາຍວ່າຢ່າງໃດ? (ເລືອກ)

ກ. ຢາກກິນນ້ຳ ຂ. ບໍ່ຍອມເຮັດຕາມນ້ຳພະໄທຂອງພະບິດາ

ຄ. ຍອມເຮັດຕາມນ້ຳພະໄທຂອງພະບິດາ

**5** ພະເຢຊູຕັ້ງໃຈວ່າຈະກະທຳຕາມນ້ຳພະໄທຂອງພະອົງໃຫ້ສຳເລັດດັ່ງນັ້ນພະອົງບໍ່ຍອມຮັບຢາບັນເທົາຄວາມເຈັບ ປວດ.ໃນເວລາພະອົງຖືກຄຶງໄວ້ທີ່ໄມ້ກາງແຂນນັ້ນ ພະອົງຮັບໂທດຂອງໃຜ? ______________________________________________________

**6** ພະເຢຊູຢາກຕັ້ງສະຕິດີໃນເມື່ອຈະຕາຍທີ່ໄມ້ກາງແຂນແທນບາບຂອງມະນຸດສະໂລກຈິ່ງບໍ່ຍອມຮັບຫຍັງ? ______________________________________________

**7** ໃຫ້ອ່ານ ມທ 27:37-44 ເຂົາຂຽນຂໍ້ຄວາມກ່າວໂທດໃສ່ໄມ້ກາງແຂນນັ້ນວ່າຢ່າງໃດ?

______________________________________________________________

**8** ຊາດໂລມເຄີຍມີທຳນຽມເຮັດປ້າຍຂຽນກ່າວໂທດຂອງຄົນທີ່ຄຶງໄວ້ທີ່ໄມ້ກາງແຂນ ເພື່ອໃຫ້ປະຊາຊົນທຸກຄົນໄດ້ເຫັນ.

ກ. ໃນໂຢຮັນ 19:19 ເຫັນວ່າແມ່ນໃຜໃຫ້ເຂົາຂຽນປ້າຍນັ້ນ? ____________________

ຂ. ໃຫ້ອ່ານ ໂຢຮັນ 19:20-22 ປີລາດຂຽນປ້າຍໄວ້ວ່າ: "ເຢຊູໄທນາຊາເລັດ ກະສັດຂອງຊາດຢິວ" ເຫັນວ່າພວກປະໂລຫິດຈິ່ງຮຽນປີລາດໃຫ້ປ່ຽນໃໝ່ແຕ່ປີລາດກະທຳຕອບຢ່າງໃດ? (ເລືອກ)

______ ຍອມປ່ຽນ ______ ບໍ່ຍອມປ່ຽນ ______ ຂໍໂທດຈາກເຂົາ

**9** ເປັນຫຍັງປີລາດບໍ່ຍອມປ່ຽນຄຳຂຽນໃສ່ປ້າຍໃຫ້ຖືກໃຈຄົນຢິວ? (ເລືອກ)

ກ. ຢາກເຮັດໃຫ້ຄົນຢິວດີໃຈ ຂ. ຢາກເຮັດໃຫ້ຄົນໂລມດີໃຈ ຄ. ຢາກເຍາະເຍີ້ຍຄົນຢິວ

**10** ກ. ປີລາດໃຫ້ເຂົາຂຽນຫຍັງໃສ່ປ້າຍນັ້ນ? ___________________________________

ຂ. ເປັນເພາະສາເຫດໃດທີ່ຂຽນຢ່າງນັ້ນ? ___________________________________

**11** ໃຫ້ອ່ານໂຢຮັນ 6:15 ແຕ່ກ່ອນມີຄົນຢິວຫຼາຍຄົນຢາກແຕ່ງຕັ້ງພະອົງເປັນກະສັດ. ເຂົາຄິດວ່າພະເຢຊູຈະເປັນກະສັດຢ່າງໃດ? (ເລືອກ)

ກ. ກະສັດທີ່ເສຍ ຂ. ກະສັດທີ່ມີໄຊດ້ານການເມືອງ

ຄ. ກະສັດດ້ານຈິດວິນຍານ

**12** ກ. ເປັນຫຍັງປີລາດຈຶ່ງຂຽນຄຳວ່າ "ເຢຊູ ກະສັດຂອງຊາດຢິວ"? ___________________

ຂ. ແຕ່ກ່ອນຊາດຢິວຢາກແຕ່ງຕັ້ງພະເຢຊູເປັນກະສັດຢ່າງໃດ? ____________________

**13** ທີ່ຈິງພະເຢຊູເປັນກະສັດເພາະເປັນກະສັດເໜືອກວ່າກະສັດທຸກອົງແລະຖ້າເຮົາເຊື່ອວ່າ ທຸກຄົນທີ່ໄວ້ວາງໃຈໃນພະອົງ ກາຍເປັນຊາດຢິວດ້ານຈິດວິນຍານເຫັນວ່າພະເຢຊູເປັນກະສັດຂອງຊາດຢິວແທ້.

ກ. ໃນໂລມ 2:28-29 ເຫັນວ່າເປັນຄົນຢິວແທ້ ບໍ່ແມ່ນຈະເປັນຄົນຢິວແຕ່ພາຍນອກເທົ່ານັ້ນ. ເປັນຊາດຢິວຢ່າງໃດ? _____________________________________________

ຂ. ແຜ່ນດິນຂອງພະເຈົ້າບໍ່ແມ່ນແຜ່ນດິນດ້ານການເມືອງ ແລະໄພ່ພົນຂອງພະເຈົ້າເປັນຄົນຈາກທຸກຊາດທຸກພາສາທີ່ ໄວ້ວາງໃຈໃນພະອົງ. ພະເຢຊູເປັນກະສັດໃນດ້ານໃດ? _____

ຄ. ເປັນກະສັດເໜືອໄພ່ພົນໃດ? ________________________________________

ງ. ໄພ່ພົນນັ້ນເປັນຊາດຢິວດ້ານເນື້ອໜັງຫຼືດ້ານຈິດວິນຍານ? ______________________

**14** ເຫັນວ່າປ້າຍທີ່ເຂົາຂຽນຕິດໄວ້ທີ່ໄມ້ກາງແຂນນັ້ນຖືກຕ້ອງ ເພາະພະເຢຊູເປັນກະສັດຂອງຄົນທີ່ເປັນຊາດຢິວດ້ານຈິດ ວິນຍານ (ຄືເປັນໄພ່ພົນຂອງພະເຈົ້າ).
ເຮົາຈະຖືວ່າພະເຢຊູເປັນກະສັດຂອງຊາດໃດ? _______________________________

**15** ກ. ໃນ ມທ 27:11 ທີ່ພະເຢຊູຍອມຮັບວ່າເປັນກະສັດຂອງຊາດຢິວ. ມີຄວາມໝາຍວ່າຢ່າງໃດ? ____________________________________________________________

ຂ. ທີ່ຄົນຢິວຢາກແຕ່ງຕັ້ງພະເຢຊູເປັນກະສັດມີຄວາມໝາຍວ່າຢ່າງໃດ?

__________________________________________________________

**16** ພະເຢຊູບໍ່ຢາກກິນນ້ຳບີເປັນຢາບັນເທົາຄວາມເຈັບປວດເພາະໃນເວລານັ້ນພະອົງແບກຫຍັງ?

_____________________________________________________________

**17** ກ. ໃຫ້ອ່ານ ມທ 27:40 ປະຊາຊົນໝິ່ນປະ ມາດພະອົງໂດຍກ່າວດັ່ງຕໍ່ໄປນີ້: "ເຈົ້າຜູ້ມ້າງ __________ ແລະ ___________ ໃນສາມວັນ ຈົ່ງຊ່ວຍຕົນເອງ." (ຕື່ມຄວາມທີ່ຂາດ)

ຂ. ໃຫ້ອ່ານ ມທ 26:60-61 ເຫັນວ່າມີພະຍານບໍ່ຈິງທີ່ບອກວ່າພະເຢຊູກ່າວວ່າຈະສາມາດມ້າງຫຍັງ ແລະສ້າງຂຶ້ນໃໝ່ ພາຍໃນສາມວັນ? _______________________________

**18** ມີເທື່ອໜຶ່ງທີ່ພະເຢຊູເວົ້າຄວາມທີ່ເຂົາເຂົ້າໃຈຜິດ. ໃຫ້ອ່ານໂຢຮັນ 2:19-22

ກ. ພະເຢຊູຍົກເລື່ອງການມ້າງພະວິຫານບໍ່? _______________________________

ຂ. ແຕ່ໃນໂຢຮັນ 2:21 ເຫັນວ່າພະເຢຊູເວົ້າເລື່ອງພະວິຫານໃດ? _________________

ຄ. ທີ່ຈິງແລ້ວແມ່ນພະເຍຊູຈະເປັນຜູ້ມ້າງ ຫຼືຈະເປັນຜູ້ຖືກມ້າງ? ____________________

ງ. ແມ່ນພວກໃດທີ່ຈະມ້າງພະກາຍຂອງພະອົງ? ________________________________

**19** ຄຳທີ່ພະເຍຊູເວົ້າໃນໂຢຮັນ 2:19-22 ເປັນຄຳທຳນວາຍເລື່ອງຫຍັງ? (ເລືອກ)

ກ. ______ ເລື່ອງພະກຳເນີດ

ຂ. ______ ເລື່ອງການສະເດັດມາເທື່ອທີສອງ

ຄ. ______ ເລື່ອງການສິ້ນພະຊົນ ແລະຄືນພະຊົນ

**20** ໃນມັດທາຍ 27:63 ເຫັນວ່າພວກຟາລິຊາຍເຫຼົ່ານັ້ນເຂົ້າໃຈຄຳທຳນວາຍຂອງພະອົງຢູ່. ເຂົາຮູ້ດີທີ່ພະເຍຊູບອກວ່າຫຼັງ ຈາກຕາຍສາມວັນຈະຄືນມາອີກ. ແຕ່ສ່ວນພະຍານານຜູ້ຕົວະແລະຜູ້ທີ່ໝິ່ນປະມາດພະອົງນັ້ນເຂົາເປັນ ຢ່າງໃດ? (ເລືອກ)

ກ. ເຂົາລືມແລ້ວ ຂ. ເຂົ້າໃຈບໍ່ຖືກ ຄ. ເຂົ້າໃຈຖືກຕ້ອງ

**21** ມີອີກເທື່ອໜຶ່ງທີ່ຄົນກ່າວອ້າງຄວາມຂອງພະເຍຊູບໍ່ຖືກໃນ ກິດຈະການ 6:14.

ກ. ພະເຍຊູຍົກຫຍັງມາປຽບທຽບພະກາຍຂອງພະອົງ? ___________________________

ຂ. ເປັນຄຳທຳນວາຍເລື່ອງຫຍັງ? __________________ ແລະ ____________________

**22** ທີ່ປີລາດໃຫ້ເຂົາຂຽນຄຳວ່າ "ເຍຊູ ກະສັດຂອງຊາດຢິວ" ມີສ່ວນຈິງຢູ່ເພາະພະເຍຊູເປັນກະສັດຂອງພວກໃດໃນຍຸກນີ້? ________________________________________________

**23** ກ. ໃນມັດທາຍ 27:40 ພວກຄົນທີ່ໝິ່ນປະ ມາດພະອົງກ່າວວ່າ ຖ້າເປັນບຸດຂອງພະເຈົ້າຈິ່ງເຮັດຫຍັງ? ____________________________________________________

ຂ. ໃນ ມທ 27:42 ມີຄົນເຍາະເຍີ້ຍພະອົງວ່າ ຖ້າເປັນກະສັດຂອງອິດສະລາເອນໃຫ້ເຮັດຫຍັງ?

_________________________________________________________________

ຄ. ໃນ ມທ 27:44 ໃຜກ່າວຄຳຫຍາບຊ້າຕໍ່ພະອົງ? _____________________________

**24** ກ. ພະເຍຊູເປັນບຸດຂອງພະເຈົ້າຈິງບໍ່? ________________________________________

ຂ. ເປັນກະສັດຈິງບໍ່? _______________________________________________________

ຄ. ຖ້າພະເຍຊູຢາກລົງມາກໍລົງມາໄດ້ບໍ່? ______________________________________

ງ. ຖ້າວ່າພະເຍຊູລົງມາ ຈະເກີດມີຜົນຮັບຢ່າງໃດ? (ເລືອກ)

_____ ມະນຸດເຮົາຈະໄດ້ລອດຄືກັນ

_____ ມີແຕ່ຄົນຊົ່ວສ່ວນນ້ອຍຈະໄດ້ລອດ

_____ ມະນຸດເຮົາບໍ່ໄດ້ລອດເລີຍ

**25** ກ. ທີ່ເຂົາກ່າວວ່າພະອົງຊ່ວຍຕົນເອງບໍ່ໄດ້ ເປັນຄວາມຈິງບໍ່? ______________________

ຂ. ຖ້າພະອົງລົງມາແລ້ວແມ່ນພວກໃດທີ່ຂາດບໍ່ໄດ້ລອດ? _________________________

**26** ໃນຫຼັກສູດມັດທາຍເຫຼັ້ມທີ 2 ເຮົາໄດ້ຮຽນມາແລ້ວເລື່ອງການທົດລອງຂອງພະອົງ. ໃນເມື່ອພະອົງຈະຖືກຄຶງໄວ້ທີ່ໄມ້ ກາງແຂນນັ້ນພະອົງຖືກທົດລອງໃຫ້ລົງມາ.

ກ. ຖ້າພະອົງຈະລົງມາ ຈະແກ້ບັນຫາດ້ານຮ່າງກາຍເຊັ່ນດຽວກັນກັບເວລາພະອົງຫິວເຂົ້າໃນບ່ອນໃດ? ______________________

ຂ. ຖ້າພະອົງຈະລົງມາຈະສະແດງອຳນາດໃຫ້ທຸກຄົນເຫັນເຊັ່ນດຽວເວລາທີ່ພະອົງຖືກທົດລອງຢູ່ເທິງຫຼັງຄາໃດ? ______________________

**27** ໃນເວລາພະອົງຖືກຄຶງໄວ້ທີ່ໄມ້ກາງແຂນພະອົງທົນທຸກຫຼາຍຢ່າງຄື:

* ຄວາມເຈັບປວດໃນຮ່າງກາຍ

* ພະອົງແບກຄວາມຜິດບາບຂອງມະນຸດສະໂລກ

* ຖືກການທົດລອງໃຫ້ລົງມາ

ກ. ທີ່ເຂົາວ່າ ພະອົງຊ່ວຍຕົນເອງບໍ່ໄດ້ເປັນຄວາມຈິງບໍ່? ______________________

ຂ. ຖ້າຢ່າງນັ້ນ ເປັນຫຍັງພະອົງບໍ່ລົງມາ? ______________________

______________________

**28** ຄຳທີ່ປີລາດໃຫ້ຂຽນໃສ່ປ້າຍເທິງໄມ້ກາງແຂນມີສ່ວນໃດທີ່ຖືກຕ້ອງ? ______________________

______________________

*ຕໍ່ໄປນີ້ເຮົາຮຽນເລື່ອງນີ້ໂດຍວິທີປຽບທຽບ ສ່ວນຕໍ່ໄປນີ້ອາດຈະຮຽນຍາກໃຫ້ທ່ານອົດທົນຮຽນໃຫ້ຈົບ.*

**29** ໃຫ້ອ່ານ ມທ 27:45-50.

ກ. ໃນ ມທ 27:46 ພະເຢຊູຮ້ອງສຽງດັງວ່າ ແມ່ນໃຜປະຖິ້ມພະອົງ? ______________________

ຂ. ໃຫ້ທ່ານເບິ່ງຂໍ້ອ້າງ (ລຸ່ມໜ້າ 101) ພະເຢຊູຍົກຄຳໃນ ມທ 27:46 ມາຈາກພະທຳບົດແລະຂໍ້ໃດໃນ ພະຄຳພີເດີມ? ______________________

**30** ກ. ພສສ 22:7 ສຳເລັດໃນມັດທາຍ ບົດທີ 27 ຂໍ້ໃດ? (ເລືອກ)

27:35 27:39 27:43 27:46

ຂ. ພສສ 22:8 ສຳເລັດໃນມັດທາຍຂໍ້ໃດ? ______________________

ຄ. ພສສ 22:18 ສຳເລັດໃນມັດທາຍຂໍ້ໃດ? ______________________

ງ. ພສສ 22:1 ສຳເລັດໃນມັດທາຍຂໍ້ໃດ? ______________________

**31** ອາດຈະແມ່ນວ່າ ພະເຢຊູຮ່ຳເພິງເພງສັນລະເສີນນັ້ນ. ພະອົງກ່າວອ້າງ ພສສ ບົດໃດ? _____

**32** ພະເຢຊູສຳນຶກຕົວວ່າ ພະບິດາປະໄປແລ້ວມີຂໍ້ພະຄຳພີໃນ ເອຊາຢາ 59:2 ແລະເອຊາຢາ 64:7 (ບໍ່ໄດ້ແປເທື່ອໃນພະຄຳພີເດີມສະບັບ 1979) ສອງຂໍ້ນັ້ນບອກວ່າ ພະອົງລີ້ໜ້າຈາກການກະທຳບາບ. ຄືມີການແບ່ງແຍກກັນລະຫວ່າງໃຜກັບຄົນບາບ? ______________________

**33** ກ. ພະເຢຊູເອງກະທຳບາບບໍ່? ______________________

*ແມ່ນແທ້ວ່າພະເຢຊູເອງບໍ່ມີບາບແຕ່ເມື່ອພະອົງຕາຍທີ່ໄມ້ກາງແຂນພະອົງເອງແບກເອົາບາບຂອງພວກເຮົາ!*

ຂ. ຄວາມບາບເຮັດໃຫ້ພະເຈົ້າຫຼີ້ຫຍັງ? ____________________

ຄ. ໃນເວລາດຽວທີ່ພະເຢຊູຕາຍທີ່ໄມ້ກາງແຂນມີການແບ່ງແຍກກັນລະຫວ່າງພະເຢຊູກັບໃຜ?

____________________

**34** ທີ່ພະເຢຊູຮ້ອງວ່າ "ພະເຈົ້າຂອງຂ້າພະອົງເອີຍ ເຫດສັນໃດຈິ່ງຊົງປະຖິ້ມຂ້າພະອົງເສຍ." ໝາຍຄວາມວ່າຢ່າງໃດ? (ເລືອກ)

ກ. ພະເຢຊູບໍ່ໄວ້ວາງໃຈໃນພະບິດາແລ້ວ

ຂ. ບາບຂອງເຮົາທີ່ພະອົງແບກ ເຮັດໃຫ້ພະບິດາຫຼີ້ໜ້າຈາກພະເຢຊູ

ຄ. ພະເຢຊູຕິຕຽນພະບິດາ ເພາະພວກສາວົກໜີປະພະອົງໄປ.

**35** ເປັນຫຍັງພະເຢຊູຮ້ອງວ່າ "ພະເຈົ້າຂອງຂ້າພະອົງເອີຍ ເຫດສັນໃດຈິ່ງຊົງປະຖິ້ມຂ້າພະອົງເສຍ."(ຈົ່ງຕື່ມຄວາມ) ເພາະຄວາມບາບຂອງ ____________________ ທີ່ພະອົງແບກ ເຮັດໃຫ້ ____________________ ຫຼີ້ໜ້າຈາກພະອົງ.

**36** ກ. ທີ່ພວກນັກທຳແລະພວກເຖົ້າແກ່ວ່າ ພະອົງຊ່ວຍຕົນເອງບໍ່ໄດ້ ເປັນຄວາມຈິງບໍ່? _______

ຂ. ເປັນຫຍັງພະອົງບໍ່ໄດ້ລົງມາ? ____________________

**37** ກ. ເມື່ອພະເຢຊູຕາຍທີ່ໄມ້ກາງແຂນ ມີການແບ່ງແຍກກັນລະຫວ່າງໃຜກັບໃຜ? ________

ຂ. ການແບ່ງແຍກກັນເພາະສາເຫດໃດ? ____________________

**38** ໃຫ້ອ່ານ ມັດທາຍ 27:51-56 ມີໝາຍສຳຄັນຫຼາຍປະການທີ່ເກີດຂຶ້ນມາໃນເວລາພະອົງຕາຍແລ້ວ. ແມ່ນສິ່ງໃດໃນພະວິຫານຖືກຈີກເປັນສອງທ່ອນ? ____________________

**39** ຜ້າກັ້ງນັ້ນເປັນການແບ່ງຫ້ອງສັກສິດທີ່ສຸດ ຈາກຫ້ອງສັກສິດ. ປະຊາຊົນຍືວມີສິດເຂົ້າ ເດີ່ນພະວິຫານ ພວກປະໂລຫິດມີສິດເຂົ້າໃນ ຫ້ອງສັກສິດ ແຕ່ໃນຫ້ອງສັກສິດທີ່ສຸດນັ້ນມີແຕ່ ມະຫາປະໂລຫິດເຂົ້າໄດ້ປີລະເທື່ອ. ຫຼັງຈາກ ບູຊາລູກແກະ ຜ້າກັ້ງນັ້ນເປັນສັນຍາລັກວ່າ: ຄວາມສັກສິດຂອງພະເຈົ້າຕ້ອງແບ່ງແຍກຈາກ ຄວາມບາບຂອງໃຜ? ____________________



**40** ຜ້າກັ້ງໃນພະວິຫານປຽບທຽບການແບ່ງແຍກລະຫວ່າງຄວາມສັກສິດຂອງ ____________ ແລະ ຄວາມບາບຂອງ ____________________ (ຕື່ມຄວາມຂາດ)

**41** ເມື່ອພະເຢຊູຕາຍແລ້ວຜ້າກັ້ງໃນພະວິຫານເປັນຢ່າງໃດ? ____________________

**42** ທີ່ຜ້າກັ້ງນັ້ນຈີກເປັນສອງຕອນໝາຍຄວາມວ່າຢ່າງໃດ? (ເລືອກ)

ກ. ການຕາຍຂອງພະອົງເປີດທາງໃຫ້ມະນຸດເຮົາເຂົ້າຕໍ່ໜ້າພະອົງໄດ້.

ຂ. ພະເຢຊູເລີ່ມມີສິດເຂົ້າໃນຫ້ອງສັກສິດພ້ອມກັນກັບພວກປະໂລຫິດ.

ຄ. ພະບິດາໃຈຮ້າຍທີ່ພວກຢິວຂ້າພະເຢຊູຈຶ່ງຈະທຳລາຍພະວິຫານ.

**43** ກ. ຜ້າກັ້ງໃນພະວິຫານປຽບທຽບຫຍັງ? ____________________________________

______________________________________________________________

ຂ. ທີ່ຈີກເປັນສອງຕອນໝາຍຄວາມວ່າຢ່າງໃດ? ______________________________

______________________________________________________________

**44** ໃຫ້ອ່ານ ເຮັບເລີ 10:19-20 ແລະ 22 ເນື່ອງຈາກພະເຢຊູຮັບໂທດບາບຂອງເຮົາໃຫ້ເຂົ້າຕໍ່ໜ້າພະເຈົ້າໄດ້ ເຮົາຄວນທີ່ ຈະເຂົ້າໄປຢ່າງໃດ? (ຕື່ມຄວາມທີ່ຂາດ)

ເຮົາຈຶ່ງເຂົ້າໄປ _______ ດ້ວຍ _______ ໃຈດ້ວຍຄວາມເຊື່ອອັນ _________________ .

*ຂ່າວນີ້ກໍເປັນຂ່າວດີເລີດ ທີ່ພວກເຮົາມີສິດເຂົ້າໃນສະຖານທີ່ສັກສິດທີ່ສຸດ ຍ້ອນວ່າພະເຢຊູຕາຍແທນບາບ ເຮົາ. ໃຫ້ທ່ານຈຶ່ງເຂົ້າຕໍ່ໜ້າພະອົງໃນທັນທີນີ້ ຍົກສະເໜີຄວາມຂອບໃຈຕໍ່ໜ້າພະອົງ.*

**45** ກ. ເປັນຫຍັງພະເຢຊູຮ້ອງວ່າ "ພະເຈົ້າຂອງຂ້າພະອົງເອີຍ ເຫດສັນໃດຈຶ່ງຊົງປະຖິ້ມຂ້າພະອົງເສຍ" (ຕື່ມຄວາມ)

ເພາະຄວາມ _______________ ຂອງມະນຸດສະໂລກເຮັດໃຫ້ມີການແບ່ງແຍກກັນ

ລະຫວ່າງ _______________ ກັບ ________________.

ຂ. ຜ້າກັ້ງທີ່ປິດຫ້ອງສັກສິດທີ່ສຸດປຽບທຽບຫຍັງ? (ຕື່ມຄວາມທີ່ຂາດ)

ຄວາມ ____ ຂອງມະນຸດເຮັດໃຫ້ມີການແບ່ງແຍກກັນລະຫວ່າງ ______ ກັບ ________ .

ຄ. ທີ່ຜ້າກັ້ງນັ້ນຖືກຈີກເປັນສອງຕອນນັ້ນສະແດງວ່າຢ່າງໃດ? ______________________

______________________________________________________________

**46** ໃຫ້ອ່ານ ມທ 27:57-66 ໂຢເຊັບໄທບ້ານອາລີມາທາຍໃຫ້ເຂົາຝັງສົບຂອງພະເຢຊູໃນອຸບໂມງຂອງຕົນ. ຖ້າບໍ່ດັ່ງນັ້ນ ເຂົາຈະເອົາສົບຂອງພະເຢຊູຝັງຮ່ວມກັບສົບຄົນໂຈນຕາມວາດ.

ກ. ປະຊາຊົນເປັນຝູງຫຼາຍຄົນໄດ້ພາກັນຂ້າພະອົງໄປແລ້ວ.ຕໍ່ໄປມີພວກຄົນຈຳນວນນ້ອຍມາເກັບສົບຂອງພະອົງໄປຝັງ. ການເຂົ້າຂ້າງກັບຄົນທີ່ປະຊາຊົນຂ້າເປັນຢ່າງໃດ? (ເລືອກ)

ອັນຕະລາຍ ເພື່ອແຜ່

ຂ. ຜູ້ທີ່ຖະຫວາຍອຸບໂມງແລະຊື້ຜ້າປ່ານສະອາດຫຸ້ມຫໍ່ສົບຂອງພະອົງໄວ້ສະແດງທ່າທີໃດ?

ອັນຕະລາຍ ເພື່ອແຜ່

**47** ຫຼາຍເທື່ອທີ່ເຮົາລົງມືຊ່ວຍໃນວຽກງານຂອງພະເຈົ້າ ມີສ່ວນທີ່ເຮົາຢາກຮັບປະໂຫຍດສ່ວນຕົວຄື:

* ຢາກໄດ້ຜົນປະໂຫຍດສ່ວນຕົວຢ່າງໃດຢ່າງໜຶ່ງ
* ຢາກໃຫ້ຜູ້ອື່ນເຫັນພ້ອມ
* ຢາກໄດ້ລາງວັນ

ທີ່ໂຢເຊັບໄທບ້ານອາລີມາທາຍໄປຮັບສົບຂອງພະອົງຝັງໃນອຸບໂມງ

* ສາວົກຂອງພະອົງກະຈັດກະຈາຍໄປແລ້ວ
* ພະອົງເອງຕາຍແລ້ວ
* ຄືຈະບໍ່ມີແຜ່ນດິນຂອງພະເຈົ້າອີກແລ້ວ

ເຖິງພະເຢຊູບອກວ່າຈະຄືນຈາກຕາຍກໍຕາມ ພວກສາວົກຂອງພະອົງບໍ່ມີຄວາມຫວັງໃນເລື່ອງນັ້ນ. ດັ່ງນັ້ນທີ່ໂຢເຊັບໄທ ບ້ານອາລີມາທາຍໄປຂໍສົບຂອງພະອົງໄປຝັງໃນອຸບໂມງຂອງຕົນເອງ.

ກ. ແມ່ນແຕ່ເພິ່ນຈະໄດ້ປະໂຫຍດສ່ວນຕົວບໍ່? ________________________________

ຂ. ເພິ່ນຢາກໃຫ້ຜູ້ອື່ນເຫັນພ້ອມບໍ່? ________________________________________

ຄ. ເພິ່ນມີຄວາມຫວັງວ່າຈະໄດ້ລາງວັນບໍ່? ____________________________________

**48** ແມ່ນດ້ວຍສາເຫດໃດທີ່ເພິ່ນສ່ຽງໄພເອົາສົບຂອງພະອົງໄປ? (ເລືອກ)

ກ. ເພາະເພິ່ນຮັກພະອົງແລະຫວັງວ່າຈະໄດ້ປະໂຫຍດສ່ວນຕົວດ້ວຍ

ຂ. ເພາະເພິ່ນຮັກພະອົງ ແລະຫວັງວ່າຜູ້ອື່ນຈະເຫັນພ້ອມດ້ວຍ.

ຄ. ເພາະເພິ່ນຮັກພະອົງ ແລະຫວັງວ່າຈະໄດ້ລາງວັນດ້ວຍ.

ງ. ເພາະເພິ່ນຮັກພະອົງຢ່າງດຽວ.

**49** ທັງພວກສາວົກແລະລູກສິດຂອງພະອົງທົ່ວໄປບໍ່ມີຄວາມຫວັງວ່າຈະໄດ້ປະໂຫຍດສ່ວນຕົວ. ປະຊາຊົນບໍ່ເຫັນ ພ້ອມແລະບໍ່ເຫັນໂອກາດທີ່ຈະໄດ້ລາງວັນຫຍັງດອກ. ໂຢເຊັບໄທບ້ານອາລີມາທາຍໄປຂໍເອົາສົບຂອງພະອົງຝັງໄວ້ເພາະເພື່ອສາເຫດອັນໃດ? ___________________

**50** ພວກຄຼິດສະຕຽນເຮົາໃນສະໄໝນີ້ ອາດຈະຕິດຕາມພະອົງໂດຍມີສາເຫດສາມຢ່າງນຳກັນຄື:

* ຮັກພະເຈົ້າແລະຢາກໄດ້ປະໂຫຍດສ່ວນຕົວ
* ຮັກພະເຈົ້າແລະຢາກໃຫ້ຜູ້ອື່ນເຫັນພ້ອມ
* ຮັກພະເຈົ້າແລະຫວັງວ່າຈະໄດ້ລາງວັນດ້ວຍ

ແຕ່ພວກເຮົາຄວນຕິດຕາມພະອົງ ເພາະສາເຫດດຽວຄືສາເຫດໃດ? __________________

**51** ກ. ເປັນຫຍັງພະອົງຮ້ອງວ່າ "ພະເຈົ້າຂອງຂ້າພະອົງເອີຍ ເຫດສັນໃດຈິ່ງຊົງປະຖິ້ມຂ້າພະອົງເສຍ" ________________________________________________________________

ຂ. ຜ້າກັ້ງໃນພະວິຫານ ເປັນສັນຍາລັກຢ່າງໃດ? ________________________________

________________________________________________________________

ຄ. ທີ່ຜ້າກັ້ງນັ້ນຈີກເປັນສອງທ່ອນສະແດງເຖິງຫຍັງ? ____________________________

____________________________________________________________________

**52** ເຫັນວ່າພະບິດາເຈົ້າລີ້ໜ້າຈາກພະເຢຊູໃນຄາວທີ່ພະອົງແບກຄວາມບາບຂອງເຮົາ ເພື່ອພວກເຮົາຈະໄດ້ມີສິດເຂົ້າ ຕໍ່ໜ້າພະບິດາໄດ້. ດັ່ງນັ້ນເຮົາຄວນຊົມຊື່ນຍິນດີແລະຂອບໃຈພະອົງ. ແມ່ນໃຜແບກບາບຂອງເຮົາໄປ? ____________________________________________

*ໃຫ້ເປີດເສັງບົດທີ 22*

**ຄຳຕອບ:**

**1** *ເຫຼົ້າແວງປະສົມກັບນ້ຳບີ*

**2** *ຂ ຖືກ*

**3** *ຢາບັນເທົາຄວາມເຈັບປວດ*

**4** *ຄ ຖືກ*

**5** *ມະນຸດສະໂລກ*

**6** *ຢາບັນເທົາຄວາມເຈັບປວດ*

**7** *ຜູ້ນີ້ຄືເຢຊູ ກະສັດຂອງຊາດຢິວ*

**8** *ກ. ປີລາດ ຂ. ບໍ່ຍອມປ່ຽນ*

**9** *ຄ ຖືກ*

**10** *ກ. "ເຢຊູ ກະສັດຂອງຊາດຢິວ" ຂ. ປີລາດຢາກເຍາະເຍີ້ຍຄົນຢິວ*

**11** *ຂ ຖືກ*

**12** *ກ. ເພື່ອເຍາະເຍີ້ຍເຂົາ ຂ. ທີ່ມີໄຊດ້ານການເມືອງ*

**13** *ກ. ພາຍໃນ ຂ. ດ້ານວິນຍານ ຄ. ໄພ່ພົນຂອງພະເຈົາ (ຈາກທຸກປະເທດ)*
*ງ. ຈິດວິນຍານ*

**14** *ຢິວ (ດ້ານວິນຍານ)*

**15** *ກ. ເປັນກະສັດຂອງຄົນທີ່ໄວ້ວາງໃຈກັບພະອົງ ຂ. ເປັນກະສັດທີ່ມີໄຊດ້ານການເມືອງ*

**16** *ແບກໂທດບາບມະນຸດສະໂລກ*

**17** *ກ. ພະວິຫານ. .. ສ້າງຂຶ້ນໃໝ່ ຂ. ພະວິຫານຂອງພະເຈົາ*

**18** *ກ. ຍົກ ຂ. ພະກາຍຂອງພະອົງ ຄ. ຈະເປັນຜູ້ຖືກມ້າງ ງ. ຊາດຢິວ*

**19** *ຄ ຖືກ*

**20** *ຂ ຖືກ*

**21** *ກ. ພະວິຫານ ຂ. ການສິ້ນພະຊົນ. .. ການຄືນພະຊົນ*

**22** *ຜູ້ທີ່ໄວ້ວາງໃຈໃນພະອົງ*

**23** *ກ. ລົງມາ ຂ. ລົງມາ ຄ. ພວກໂຈນ*

**ຄຳຕອບ (ຕໍ່):**

**24** *ກ. ຈິງ ຂ. ຈິງ ຄ. ໄດ້ ງ. ມະນຸດເຮົາບໍ່ໄດ້ລອດເລີຍ*

**25** *ກ. ບໍ່ຈິງ ຂ. ມະນຸດເຮົາ*

**26** *ກ. ປ່າ ຂ. ພະວິຫານ*

**27** *ກ. ບໍ່ຈິງ*

*ຂ. ຖ້າພະອົງຈະລົງມາ ພະອົງຈະບໍ່ຕາຍແທນມະນຸດສະໂລກ (ຄຳຄ້າຍຄືກັນກໍໄດ້)*

**28** *ຄືພະເຢຊູເປັນກະສັດຂອງທຸກຄົນທີ່ໄວ້ວາງໃຈໃນພະອົງ*

**29** *ກ. ພະເຈົາ ຂ. ພສສ 22:1*

**30** *ກ. 27:39 ຖືກ ຂ. 27:43 ຄ. 27:35 ງ. 27:46*

**31** *22*

**32** *ພະເຈົາ*

**33** *ກ. ບໍ່ ຂ. ໜ້າ ຄ. ພະເຈົາ (ພະບິດາ)*

**34** *ຂ ຖືກ*

**35** *ມະນຸດເຮົາ. .. ພະບິດາ*

**36** *ກ. ບໍ່ຈິງ ຂ. ຖ້າພະອົງບໍ່ຕາຍແທນເຮົາ ພວກເຮົາຈະບໍ່ໄດ້ລອດ*

**37** *ກ. ພະເຢຊູກັບພະບິດາ ຂ. ເພາະພະອົງແບກບາບຂອງເຮົາ*

**38** *ຜ້າກັ້ງ*

**39** *ມະນຸດ*

**40** *ພະເຈົາ... ມະນຸດ*

**41** *ຖືກຈີກເປັນສອງຕ່ອນ*

**42** *ກ ຖືກ*

**43** *ກ. ຄວາມບາບຂອງມະນຸດເຂົາຮ່ວມກັບຄວາມສັກສິດຂອງພະເຈົາບໍ່ໄດ້. (ຄຳຄ້າຍຄືກັນກໍໄດ້)*

*ຂ. ການຕາຍຂອງພະເຢຊູແທນບາບເຮົາ ເປີດທາງໃຫ້ເຮົາເຂົາຕໍ່ໜ້າພະເຈົາໄດ້ (ຄຳຄ້າຍຄືກັນກໍໄດ້)*

**44** *ໃກ້... ຈິງ... ເຕັມບໍລິບູນ*

**45** *ກ. ບາບ... ພະເຢຊູ... ພະບິດາ ຂ. ບາບ... ຄົນບາບ... ພະບິດາເຈົາ*

*ຄ. ເມື່ອຕາຍພະອົງຍົກຜິດບາບຂອງເຮົາໃຫ້ຫາຍເຮົາຈຶ່ງມີສິດເຂົາຕໍ່ໜາພະເຈົາໄດ້ (ຄຳຄ້າຍຄືກັນກໍໄດ້)*

**46** *ກ. ອັນຕະລາຍ ຂ. ເພື່ອແຜ່*

**47** *ກ. ບໍ່ ຂ. ບໍ່ ຄ. ບໍ່*

**48** *ງ ຖືກ.*

**49** *ຄວາມຮັກ*

**ຄຳຕອບ (ຕໍ່):**

**50** *ຄວາມຮັກ*

**51** *ກ. ພະອົງແບກຄວາມບາບຂອງໂລກ ເຮັດໃຫ້ພະເຈົ້າລີ້ໜ້າ (ຄຳຄ້າຍຄືກັນກໍໄດ້)*

*ຂ. ແບ່ງແຍກຄວາມສັກສິດຂອງພະເຈົ້າຈາກຄວາມບາບຂອງມະນຸດ. (ຄຳຄ້າຍຄືກັນກໍໄດ້)*

*ຄ. ເມື່ອພະເຢຊູຕາຍແທນບາບເຮົາ ເປີດທາງໃຫ້ເຮົາເຂົ້າຕໍ່ໜ້າພະເຈົ້າໄດ້.*

**52** *ພະເຢຊູ*